ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຝຶກອົບຮົມ " ການບໍລິຫານບຸກຄະລາກອນ " ໃຫ້ແກ່ພະນັກງານທະນາຄານ



ທະນາຄານແຫ່ງ ສປປ ລາວ ( ທຫລ ) ຮ່ວມກັບສະຖາບັນພັດທະນາຊັບພະຍາກອນມະນຸດ ລາວ-ຍີ່ປຸ່ນ ( ສລຍ ) ໄດ້ເປີດຊຸດຝຶກອົບຮົມ ໃນຫົວຂໍ້ " ການບໍລິຫານບຸກຄະລາກອນ " ໃຫ້ແກ່ພະນັກງານທະນາຄານ ຂຶ້ນທີ່ ສລຍ, ມະຫາວິທະຍາໄລແຫ່ງຊາດ ໃນລະຫວ່າງວັນທີ 20-24 ມີນາ 2017 ໂດຍແມ່ນອາຈານທີ່ມີປະສົບການສູງດ້ານການບໍລິຫານບຸກຄະລາກອນຈາກປະເທດໄທ ເປັນນັກວິທະຍາກອນ ແລະ ມີນັກຝຶກອົບຮົມທີ່ມາຈາກບັນດາກົມ-ທຽບເທົ່າກົມພາຍໃນ ທຫລ, ສາຂາ ທຫລ ປະຈຳພາກ ແລະ ທະນາຄານທຸລະກິດລັດສຳນັກງານໃຫຍ່ ແລະ ສາຂາທ້ອງຖິ່ນເຂົ້າຮ່ວມ.





ການຝຶກອົບຮົມໃນຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ຮຽນຮູ້ກ່ຽວກັບການບໍລິຫານບຸກຄະລາກອນ ໃນນັ້ນມີ: ຈິດຕະສາດ, ໜ້າທີ່ ແລະ ສະພາບແວດລ້ອມ; ການບໍລິຫານພຶດຕິກຳຂອງພະນັກງານ, ການຈູງໃຈພະນັກງານ, ການບໍລິຫານການປ່ຽນແປງ, ແນວຄວາມຄິດການບໍລິຫານຊັບພະຍາກອນມະນຸດ ແລະ ຂັ້ນຕອນ, ການບໍລິຫານການຈັດຕັ້ງປະຕິບັດ ແລະ ການຜູກມັດພະນັກງານ ພ້ອມນັ້ນ, ນັກຝຶກອົບຮົມ ຍັງໄດ້ຮັບຟັງກໍລະນີສຶກສາທີ່ປະສົບຜົນສຳເລັດຂອງສະມາຄົມຕູຈິ ( Tzu chi ) ເຊິ່ງມີ ຄວາມເປັນຜູ້ນຳ, ຊັບພະຍາກອນມະນຸດ, ແຮງຈູງໃຈ ແລະ ການເຊື່ອມໂຍງ ພ້ອມທັງຈັດກິດຈະກຳຈຳລອງໃນການບໍລິຫານບຸກຄະລະກອນ ນຳອີກ.





❖ *ຂ່າວ-ພາບ: ຄຳສອນ ສະວິສຸກ*

*ຄົນລາວຍຸກໃໝ່ ຈົ່ງພູມໃຈ ແລະ ນຳໃຊ້ເງິນກີບ*